STATE OF CALIFORNIA--HEALTH AND HUMAN SERVICES AGENCY GAVIN NEWSOM, Governor

# DEPARTMENT OF DEVELOPMENTAL SERVICES

1600 NINTH STREET, Room 320, MS 3-8
SACRAMENTO, CA 95814
TTY (916) 654-2054 (ສຳລັບຄົນພິການຫູ) (916) 654-1954

11 ມັງກອນ 2019

ເຖິງ: ຫົວໜ້າຜູ້ບໍລິຫານສູນປະຈຳພາກ (REGIONAL CENTER EXECUTIVE DIRECTORS)

ເລື່ອງ: ໂຄງການການຕັດສິນໃຈດ້ວຍຕົວເອງ: ການສ້າງງົບປະມານບຸກຄົນ ແລະ ແຜນການໃຊ້ຈ່າຍ

ໄປຄຽງຄູ່ກັບຫຼັກການສຳຄັນຂອງໂຄງການການຕັດສິນໃຈດ້ວຍຕົວເອງ (SDP), ຜູ້ເຂົ້າຮ່ວມມີອຳນາດຄວບຄຸມຈຳນວນເງິນສະເພາະ ເພື່ອຊື້ການບໍລິການ ແລະ ການສະໜັບສະໜູນທີ່ຈຳເປັນ. ເງິນຈຳນວນນີ້ເອີ້ນວ່າ ງົບປະມານບຸກຄົນ. ຈຸດປະສົງຂອງການຕິດຕໍ່ນີ້ ເພື່ອໃຫ້ເງື່ອນໄຂກຳນົດສຳລັບການກຳນົດຈຳນວນງົບປະມານບຸກຄົນ ແລະ ສາມາດນຳໃຊ້ເງິນຈຳນວນນີ້ໄດ້ແນວໃດ. ຂໍ້ຄວາມບາງຕອນທີ່ຕັດມາຈາກ Welfare & Institutions (W&I) Code (ປະມວນກົດໝາຍສະຫວັດດີການ ແລະ ສະຖາບັນ) ແມ່ນໄດ້ສອດມານຳນີ້ (ໃຫ້ເບິ່ງເອກະສານສອດມານຳທີ 1).

## <u>ນິຍາມຄຳສັບ</u>

ຄຳສັບຕໍ່ໄປນີ້ແມ່ນໄດ້ນຳໃຊ້ຢູ່ໃນການຕິດຕໍ່ນີ້ຄື:

- **ງົບປະມານບຸກຄົນ** – ນີ້ແມ່ນຈຳນວນເງິນລວມຂອງສູນປະຈຳພາກທີ່ມີໃຫ້ກັບຜູ້ເຂົ້າຮ່ວມ SDP ໃນແຕ່ລະປີ.
- **ແຜນການໃຊ້ຈ່າຍ** – ແຜນການນີ້ໃຫ້ລາຍລະອຽດວ່າເງິນທີ່ມີຢູ່ຈະຖືກນຳໃຊ້ແນວໃດ ເພື່ອຊື້ການບໍລິການ ແລະ ສະໜັບສະໜູນທີ່ຈຳເປັນ ເພື່ອຈັດຕັ້ງປະຕິບັດແຜນໂຄງການບຸກຄົນ (IPP).

## <u>ການກຳນົດຈຳນວນງົບປະມານບຸກຄົນ</u>

ຈຳນວນງົບປະມານບຸກຄົນຖືກກຳນົດດ້ວຍໜຶ່ງໃນວິທີຕໍ່ໄປນີ້.

1. **ສຳລັບຜູ້ເຂົ້າຮ່ວມ ຜູ້ທີ່ໄດ້ຮັບການບໍລິການຂອງສູນປະຈຳພາກຢູ່ໃນປັດຈຸບັນ** – ຈຳນວນງົບປະມານບຸກຄົນແມ່ນອີງຕາມລາຍຈ່າຍຂອງສູນປະຈຳພາກທັງໝົດໃນ 12 ເດືອນກ່ອນທີ່ໄດ້ໃຊ້ຊື້ການບໍລິການຢູ່ໃນ IPP. ຈຳນວນນີ້ແມ່ນຈະຖືກຄິດໄລ່ດ້ວຍຂໍ້ມູນ 12 ເດືອນຫຼ້າສຸດ.

   ຈຳນວນນີ້ສາມາດປັບປ່ຽນໄດ້ກໍ່ຕໍ່ເມື່ອ<u>ທັງສອງ</u>ຢ່າງຕໍ່ໄປນີ້ເກີດຂຶ້ນຄື:

**“ສ້າງການເປັນຫຸ້ນສ່ວນ, ໃຫ້ການສະໜັບສະໜູນທາງເລືອກ”**

- ທີມ IPP ກຳນົດການປັບໃສ່ຈຳນວນນີ້ມີຄວາມຈຳເປັນເນື່ອງຈາກການປ່ຽນແປງຄວາມຕ້ອງການຂອງຜູ້ເຂົ້າຮ່ວມ, ສະພາບການ ແລະ ຊັບພະຍາກອນ ຫຼື ທີມກຳນົດຄວາມຕ້ອງການບຸລິມະສິດ ຫຼື ຊັບພະຍາກອນທີ່ບໍ່ໄດ້ກ່າວໄວ້ຢູ່ໃນ IPP ທີ່ຈະໄດ້ເຮັດໃຫ້ມີການເພີ່ມ ຫຼື ຫຼຸດຈຳນວນລາຍຈ່າຍຂອງສູນປະຈຳພາກ. ຕົວຢ່າງຂອງເວລາທີ່ອາດຈະມີຄວາມຈຳເປັນໃນການປັບຈຳນວນງົບປະມານບຸກຄົນລວມມີບໍ່ຈຳກັດແຕ່ການປ່ຽນແປງສະພາບການດຳລົງຊີວິດເມື່ອບໍ່ດົນມານີ້/ພວກປ່ຽນແປງຢູ່; ການບໍລິການທີ່ໄດ້ຮັບຜ່ານມາທີ່ບໍ່ຕ້ອງການອີກ; ການບໍລິການລວມຢູ່ໃນ IPP ບໍ່ຖືກນຳໃຊ້ເນື່ອງຈາກການເຈັບປ່ວຍ ຫຼື ຂາດການມີຜູ້ໃຫ້ບໍລິການ, ດັ່ງນັ້ນຈຶ່ງບໍ່ມີຄ່າໃຊ້ຈ່າຍເກີດຂຶ້ນ.
- ສູນປະຈຳພາກຍັ້ງຢືນລາຍຈ່າຍໃຊ້ຄິດໄລ່ຈຳນວນງົບປະມານບຸກຄົນ, ລວມທັງການປັບໃດໜຶ່ງຈະເກີດຂຶ້ນ ໂດຍບໍ່ຄຳນຶງເຖິງການເຂົ້າຮ່ວມຂອງບຸກຄົນຢູ່ໃນ SDP.

2. **ສຳລັບຜູ້ເຂົ້າຮ່ວມຜູ້ທີ່ມີສິດໄດ້ຮັບການບໍລິການຂອງສູນປະຈຳພາກໃໝ່ໆ ຫຼື ຜູ້ທີ່ບໍ່ມີການຊື້ຂອງສູນປະຈຳພາກ 12 ເດືອນ**
ຈຳນວນງົບປະມານບຸກຄົນຖືກຄິດໄລ່ຕາມຕໍ່ໄປນີ້:

- ຕາມປະມວນກົດໝາຍ W&I ຂໍ້ທີ 4646 ກຳນົດ, ທີມ IPP ກຳນົດການບໍລິການ ແລະ ການສະໜັບສະໜູນທີ່ຜູ້ເຂົ້າຮ່ວມຕ້ອງການ.
- ສູນປະຈຳພາກຄິດໄລ່ຄ່າໃຊ້ຈ່າຍປະຈຳປີຂອງການໃຫ້ການບໍລິການ ແລະ ການສະໜັບສະໜູນ. ອັນນີ້ແມ່ນເຮັດໂດຍການໃຊ້ຄ່າໃຊ້ຈ່າຍສະເລ່ຍໄດ້ຈ່າຍໃຫ້ກັບການບໍລິການ ແລະ ການສະໜັບສະໜູນທີ່ໄດ້ລະບຸໄວ້ແຕ່ລະອັນ ແລະ ທີມ IPP ຈຳເປັນຕ້ອງໄດ້ກຳນົດການບໍລິການ ຫຼື ການສະໜັບສະໜູນແຕ່ລະອັນເລື້ອຍປານໃດ. ຄ່າໃຊ້ຈ່າຍສະເລ່ຍອາດຈະຖືກປັບປ່ຽນ ຖ້າສູນປະຈຳພາກກຳນົດຜູ້ເຂົ້າຮ່ວມມີຄວາມຕ້ອງການສະເພາະທີ່ເຮັດໃຫ້ຄ່າໃຊ້ຈ່າຍສູງຂຶ້ນ ຫຼື ຕ່ຳລົງ. ຄວາມຕ້ອງການສະເພາະອາດຈະລວມເອົາບໍ່ຈຳກັດແຕ່ຄວາມມັກທາງດ້ານພາສາ, ການສະໜັບສະໜູນຄວາມຕ້ອງການທາງດ້ານພຶດຕິກຳ/ການແພດ ແລະ ສະຖານທີ່ໃຫ້ບໍລິການທີ່ນຳໃຊ້ໄດ້.
- ສູນປະຈຳພາກຍັ້ງຢືນຈຳນວນງົບປະມານບຸກຄົນຈະໄດ້ໃຊ້ຈ່າຍໂດຍບໍ່ຄຳນຶງເຖິງການເຂົ້າຮ່ວມຂອງບຸກຄົນຢູ່ໃນ SDP.

ຈຳນວນງົບປະມານບຸກຄົນຈະບໍ່ເພີ່ມຂຶ້ນ ເພື່ອເປັນເງິນໃຫ້ແກ່ຜູ້ອຳນວຍຄວາມສະດວກເອກະລາດ ຫຼື ການບໍລິການຄຸ້ມຄອງການເງິນ (FMS). ຈຳນວນງົບປະມານບຸກຄົນໄດ້ຄິດໄລ່ບໍ່ເກີນຄັ້ງໜຶ່ງໃນທຸກໆ 12 ເດືອນ ນອກຈາກວ່າມີຄວາມຈຳເປັນຕ້ອງໄດ້ມີການປັບປ່ຽນຕາມທີ່ໄດ້ອະທິບາຍມາຂ້າງເທິງເນື່ອງຈາກວ່າມີການປ່ຽນແປງຄວາມຕ້ອງການຂອງບຸກຄົນ, ສະພາບການ ຫຼື ຊັບພະຍາກອນ ແລະ ສູນປະຈຳພາກຍັ້ງຢືນລາຍຈ່າຍຈະເກີດຂຶ້ນໂດຍບໍ່ຄຳນຶງເຖິງການເຂົ້າຮ່ວມຂອງບຸກຄົນຢູ່ໃນ SDP.

**<u>ແຜນການໃຊ້ຈ່າຍ</u>**

ທີມ IPP ຕ້ອງໃຊ້ຂະບວນການວາງແຜນເອົາຄົນເປັນໃຈກາງ ເພື່ອສ້າງ IPP ເຊິ່ງກໍານົດປະເພດ ແລະ ຈໍານວນຂອງການບໍລິການ ແລະ ການສະໜັບສະໜູນທີ່ຕ້ອງການທັງໝົດ ເພື່ອບັນລຸຜົນໄດ້ຮັບທີ່ວາງແຜນໄວ້ ແລະ ຮັບປະກັນສຸຂະພາບ ແລະ ຄວາມປອດໄພຂອງຜູ້ເຂົ້າຮ່ວມ. ຫຼັງຈາກໄດ້ກໍານົດງົບປະມານບຸກຄົນແລ້ວ, ຜູ້ເຂົ້າຮ່ວມຕ້ອງສ້າງແຜນເພື່ອນໍາໃຊ້ເງິນທີ່ມີໃຫ້ບັນລຸເປົ້າໝາຍ ແລະ ຈຸດປະສົງຂອງຕົນເອງຕາມທີ່ໄດ້ກໍານົດໄວ້ຢູ່ໃນ IPP ຂອງພວກເຂົາ. ແຜນການໃຊ້ຈ່າຍຕ້ອງເອົາຄັດຕິດໃສ່ IPP.

ແຜນການໃຊ້ຈ່າຍຕ້ອງລະບຸຄ່າໃຊ້ຈ່າຍຂອງການບໍລິການ ແລະ ການສະໜັບສະໜູນແຕ່ລະອັນທີ່ຈະໄດ້ຊື້ດ້ວຍເງິນຂອງສູນປະຈໍາພາກ. ອັນນີ້ລວມມີຄ່າໃຊ້ຈ່າຍສໍາລັບ FMS, ເຊິ່ງແມ່ນການບໍລິການທີ່ຈໍາເປັນສໍາລັບຜູ້ເຂົ້າຮ່ວມ SDP ທັງໝົດ. ຜູ້ເຂົ້າຮ່ວມອາດຈະຕ້ອງການການສະໜັບສະໜູນຈາກຜູ້ອື່ນເຊັ່ນ: ຜູ້ອໍານວຍຄວາມສະດວກເອກະລາດ ເພື່ອເຈລະຈາຕໍ່ລອງກັບຜູ້ໃຫ້ບໍລິການ ເພື່ອກໍານົດຄ່າໃຊ້ຈ່າຍສໍາລັບການບໍລິການແຕ່ລະອັນ.
ໃນການເພີ່ມເຕີມໃສ່ຄ່າຈ້າງ, ຄ່າໃຊ້ຈ່າຍສໍາລັບຜົນປະໂຫຍດ ແລະ ພາສີເງິນເດືອນຂອງລູກຈ້າງຕ້ອງໄດ້ເອົາລວມເຂົ້ານໍາ ເມື່ອທໍາການກໍານົດຄ່າໃຊ້ຈ່າຍຂອງການບໍລິການແຕ່ລະອັນ. ຈໍານວນຂອງແຜນການໃຊ້ຈ່າຍທັງໝົດບໍ່ສາມາດເກີນຈໍານວນງົບປະມານບຸກຄົນໄດ້.

ເງິນຂອງ SDP ສາມາດໃຊ້ໄດ້ພຽງແຕ່ສໍາລັບການບໍລິການທີ່:

- ໄດ້ຮັບການອະນຸມັດໂດຍສູນບໍລິການ Medicare ແລະ Medicaid (Centers for Medicare and Medicaid Services) ຂອງລັດຖະບານກາງ; ແລະ
- ບໍ່ມີໃຫ້ຜ່ານແຫຼ່ງທຶນອື່ນ (ຕົວຢ່າງ: Medi-Cal, ການບໍລິການສະໜັບສະໜູນຢູ່ໃນບ້ານ, ໂຮງຮຽນ, ອື່ນໆ).

**<u>ແຜນການໃຊ້ຈ່າຍປ່ຽນແປງ</u>**

ການບໍລິການແຕ່ລະອັນຢູ່ໃນແຜນການໃຊ້ຈ່າຍຕົກຢູ່ໜຶ່ງໃນສາມໝວດງົບປະມານໃຫຍ່ (ເບິ່ງເອກະສານຊອດມານໍາ 2 ສໍາລັບລາຍການບໍລິການ ແລະ ໝວດງົບປະມານນັບແຕ່ເດືອນມັງກອນ 2019). ຜູ້ເຂົ້າຮ່ວມອາດຈະໂອນເງິນເບື້ອງຕົ້ນຢູ່ໃນໝວດງົບປະມານໃດໜຶ່ງໄປຫາໝວດງົບປະມານອື່ນ ຫຼື ໝວດຕ່າງໆປະຈໍາປີໄດ້ເຖິງ 10 ເປີເຊັນ ໂດຍບໍ່ຕ້ອງມີການອະນຸມັດຈາກສູນປະຈໍາພາກ ຫຼື ທີມ IPP. ການໂອນໝວດງົບປະມານເກີນ 10 ເປີເຊັນແມ່ນຈໍາເປັນຕ້ອງໄດ້ມີການອະນຸມັດ/ການເຫັນດີຈາກສູນປະຈໍາພາກ ຫຼື ທີມ IPP.

ຖ້າມີຄຳຖາມກ່ຽວກັບຂໍ້ມູນນີ້ ຫຼື ເພື່ອຂໍການຊ່ວຍເຫຼືອດ້ານວິຊາການ, ກະລຸນາສົ່ງອີເມວຫາ sdp@dds.ca.gov.

ດ້ວຍຄວາມຮັກແພງ,

*ລົງລາຍເຊັນເບື້ອງຕົ້ນໂດຍ:*

JIM KNIGHT (ຈິມ ໄນ້)
ຜູ້ຊ່ວຍຮອງຫົວໜ້າພະແນກບໍລິການຊຸມຊົນ

ເອກະສານສອດມານຳ:

ສຳເນົາສົ່ງ: ຜູ້ບໍລິຫານປະຈຳພາກ (Regional Center Administrators), ທີ່ປຶກສາຫົວໜ້າສູນປະຈຳພາກ (Regional Center Chief Counselors)
ຫົວໜ້າຝ່າຍບໍລິການຊຸມຊົນສູນປະຈຳພາກ (Regional Center Community Services Directors),
ສະມາຄົມໜ່ວຍງານສູນປະຈຳພາກ (Association of Regional Center Agencies)
ສະພາຂອງລັດວ່າດ້ວຍຄົນພິການທາງດ້ານພັດທະນາການ (State Council on Developmental Disabilities), ໄບຣອັນ ວິນຟີລ (Brian Winfield), ຮອງຜູ້ອຳນວຍການ (Chief Deputy Director), DDS
ປາຕີ ເມຣີກັນຕານເຕ (Patti Mericantante), ຮອງຜູ້ອຳນວຍການ (Deputy Director), ຝ່າຍບໍລິຫານ (Administration), DDS

**ເອກະສານສອດມານຳ 1**

**<u>ງົບປະມານບຸກຄົນຈາກປະມວນກົດໝາຍສະຫວັດດີການ ແລະ ສະຖາບັນ (Welfare & Institutions (W&I)</u>**

§4685.8(c)(3) "ງົບປະມານບຸກຄົນ" ໝາຍເຖິງຈຳນວນການຊື້ການໃຫ້ເງິນບໍລິການຂອງສູນປະຈຳພາກມີໃຫ້ກັບຜູ້ເຂົ້າຮ່ວມສຳລັບການຊື້ການບໍລິການ ແລະ ການສະໜັບສະໜູນທີ່ຈຳເປັນເພື່ອຈັດຕັ້ງປະຕິບັດ IPP. ງົບປະມານບຸກຄົນຖືກກຳນົດດ້ວຍການໃຊ້ວິທີການທີ່ເປັນທຳ, ເທົ່າທຽມກັນ ແລະ ໂປ່ງໃສ.

§4685.8(c)(6) ໂຄງການການຕັດສິນໃຈດ້ວຍຕົວເອງຈະໃຫ້ເງິນແກ່ການບໍລິການ ແລະ ການສະໜັບສະໜູນທີ່ໄດ້ໃຫ້ຕາມການແບ່ງນີ້ ທີ່ສູນບໍລິການ Medicare ແລະ Medicaid (Centers for Medicare and Medicaid Services) ຂອງລັດຖະບານກາງກຳນົດມີສິດສຳລັບການມີສ່ວນຮ່ວມທາງດ້ານການເງິນຂອງລັດ.

§4685.8(d)(3)(B) ຜູ້ເຂົ້າຮ່ວມຈະໃຊ້ການບໍລິການ ແລະ ການສະໜັບສະໜູນທີ່ມີໃຫ້ຢູ່ພາຍໃນໂຄງການການຕັດສິນໃຈດ້ວຍຕົວເອງພຽງແຕ່ເມື່ອບໍ່ມີການບໍລິການ ແລະ ການສະໜັບສະໜູນທົ່ວໄປໃຫ້.

§4685.8(n)(A)(ii)(II) ຍົກເວັ້ນຕາມທີ່ໄດ້ໃຫ້ໄວ້ຢູ່ໃນວັກ (4), ທີມ IPP ຈະກຳນົດງົບປະມານບຸກຄົນເບື້ອງຕົ້ນ ແລະ ແກ້ໄຂໃດໜຶ່ງສຳລັບຜູ້ເຂົ້າຮ່ວມດ້ວຍການໃຊ້ວິທີການຕໍ່ໄປນີ້ຄື: (A)(i) ຍົກເວັ້ນຕາມທີ່ໄດ້ລະບຸໄວ້ໃນຂໍ້ທີ (ii), ສຳລັບຜູ້ເຂົ້າຮ່ວມ ຜູ້ທີ່ເປັນຜູ້ຊົມໃຊ້ສູນປະຈຳພາກໃນປັດຈຸບັນ, ງົບປະມານບຸກຄົນຂອງລາວ ຫຼື ຂອງນາງຈະເປັນຈຳນວນທັງໝົດຂອງການຊື້ລາຍຈ່າຍການບໍລິການສຳລັບຜູ້ເຂົ້າຮ່ວມທີ່ມີໃຫ້ 12 ເດືອນຫຼ້າສຸດ.
(ii) ອາດຈະໄດ້ປັບໃສ່ຈຳນວນທີ່ໄດ້ລະບຸໄວ້ຢູ່ໃນຂໍ້ທີ (i) ຖ້າທັງສອງອັນຕໍ່ໄປນີ້ເກີດຂຶ້ນ:
(I) ທີມ IPP ກຳນົດວ່າ ການປັບໃສ່ຈຳນວນນີ້ມີຄວາມຈຳເປັນເນື່ອງຈາກການປ່ຽນແປງຢູ່ໃນສະພາບການ, ຄວາມຕ້ອງການ ຫຼື ຊັບພະຍາກອນຂອງຜູ້ເຂົ້າຮ່ວມທີ່ຈະສົ່ງຜົນໃຫ້ມີການເພີ່ມຂຶ້ນ ຫຼື ການຫຼຸດລົງຢູ່ໃນການຊື້ການບໍລິການ ຫຼື ທີມ IPPກຳນົດຄວາມຕ້ອງການບຸລິມະສິດ ຫຼື ຊັບພະຍາກອນທີ່ບໍ່ໄດ້ຖືກກ່າວໄວ້ຢູ່ໃນ IPP ທີ່ຈະໄດ້ເຮັດໃຫ້ມີການເພີ່ມຂຶ້ນ ຫຼື ຫຼຸດລົງຢູ່ໃນການຊື້ລາຍຈ່າຍການບໍລິການ.
(II) ສູນປະຈຳພາກຢັ້ງຢືນກ່ຽວກັບເອກະສານງົບປະມານບຸກຄົນທີ່ລາຍຈ່າຍຂອງສູນປະຈຳພາກສຳລັບງົບປະມານບຸກຄົນ, ລວມທັງການປັບປ່ຽນໃດໜຶ່ງຈະໄດ້ເກີດຂຶ້ນໂດຍບໍ່ຕ້ອງຄຳນຶງເຖິງການເຂົ້າຮ່ວມຂອງບຸກຄົນຢູ່ໃນໂຄງການການຕັດສິນໃຈດ້ວຍຕົວເອງ.

§4685.8(o) ໃນແຕ່ລະປີ, ຜູ້ເຂົ້າຮ່ວມອາດຈະໂອນເງິນທີ່ໄດ້ແຈກຢາຍເບື້ອງຕົ້ນໃຫ້ກັບໝວດງົບປະມານໃດໜຶ່ງທີ່ກຳນົດໄວ້ຢູ່ໃນວັກທີ (3) ຂອງການແບ່ງຍ່ອຍ (n) ໄປຫາໝວດງົບປະມານອື່ນ ຫຼື ບັນດາໝວດງົບປະມານໄດ້ເຖິງ 10 ເປີເຊັນ. ການໂອນເກີນ 10 ເປີເຊັນຂອງຈຳນວນເບື້ອງຕົ້ນທີ່ໄດ້ຈັດແບ່ງໃຫ້ກັບໝວດງົບປະມານໃດໜຶ່ງອາດຈະໄດ້ເຮັດຕາມການອະນຸມັດຂອງສູນປະຈຳພາກ ຫຼື ທີມ IPP ຂອງຜູ້ເຂົ້າຮ່ວມ.

**ເອກະສານສອດມານຳ 2**

**ການບໍລິການໂຄງການການຕັດສິນໃຈດ້ວຍຕົວເອງຕາມໝວດງົບປະມານ**

| ໝວດງົບປະມານ | ການບໍລິການ |
|---|---|
| ການຈັດແຈງການດຳລົງຊີວິດ | √ ການສະໜັບສະໜູນການດຳລົງຊີວິດຂອງຊຸມຊົນ<br>√ ການບໍລິການຄຸ້ມຄອງການເງິນ<br>√ ຜູ້ຈັດບ້ານ<br>√ ການສະໜັບສະໜູນການເຂົ້າເຖິງທີ່ຢູ່ອາໄສ<br>√ ຜູ້ໃຫ້ການເບິ່ງແຍງດູແລອາໄສຢູ່ໃນ<br>√ ການບໍລິການພັກຜ່ອນ |
| ການຈ້າງເຮັດວຽກ ແລະ ການເຂົ້າຮ່ວມຊຸມຊົນ | √ ການສະໜັບສະໜູນການປະສົມປະສານຂອງຊຸມຊົນ<br>√ ການສະໜັບສະໜູນການຈ້າງເຮັດວຽກ<br>√ ຜູ້ອຳນວຍຄວາມສະດວກເອກະລາດ<br>√ ການຝຶກອົບຮົມ ແລະ ການສຶກສາບຸກຄົນ<br>√ ການເດີນທາງທີ່ບໍ່ແມ່ນທາງການແພດ<br>√ ສິນຄ້າ ແລະ ການບໍລິການຜູ້ເຂົ້າຮ່ວມສັ່ງ<br>√ ການສະໜັບສະໜູນກ່ອນມີວິຊາຊີບ<br>√ ເຕັກໂນໂລຊີ<br>√ ການທັນອອກ/ການເລີ່ມຕົ້ນ ແລະ ຄ່າໃຊ້ຈ່າຍ |
| ສຸຂະພາບ ແລະ ຄວາມປອດໄພ | √ ການບໍລິການຝັງເຂັມ<br>√ ການບໍລິການເຂົ້າຊ່ວຍເຫຼືອທາງດ້ານພຶດຕິກຳ<br>√ ການບໍລິການບຳບັດດ້ວຍການຈັບກະດູກສັນຫຼັງ<br>√ ການສະໜັບສະໜູນການສື່ສານ<br>√ ການເຂົ້າຊ່ວຍເຫຼືອວິກິດການ ແລະ ການສະໜັບສະໜູນ<br>√ ການບໍລິການປິ່ນປົວແຂ້ວ<br>√ ການປັບຕົວການເຂົ້າເຖິງທາງສະພາບແວດລ້ອມ<br>√ ການຝຶກອົບຮົມຄອບຄົວ/ຜູ້ຊົມໃຊ້<br>√ ການບໍລິການສະໜັບສະໜູນຂອງຄອບຄົວ<br>√ ການບໍລິການຊ່ວຍເຫຼືອສຸຂະພາບຢູ່ໃນບ້ານ<br>√ ເລນ ແລະ ກອບແວ່ນຕາ<br>√ ການບຳບັດດ້ວຍການນວດ<br>√ ການປຶກສາທາງດ້ານໂພຊະນາການ<br>√ ການບຳບັດທາງດ້ານອາຊີບ<br>√ ການບໍລິການວັດແທກສາຍຕາ/ຜູ້ຊ່ຽວຊານຕາ<br>√ ລະບົບການສະໜອງຕອບສຸກເສີນສ່ວນຕົວ<br>√ ການບຳບັດຮ່າງກາຍ<br>√ ການບໍລິການທາງຈິດຕະສາດ<br>√ ການພະຍາບານຊຳນານງານ<br>√ ອຸປະກອນ ແລະ ເຄື່ອງມືຮັບໃຊ້ທາງການແພດພິເສດ<br>√ ການບໍລິການທາງດ້ານການເວົ້າ, ການຟັງ ແລະ ພາສາ<br>√ ການບໍລິການຝຶກອົບຮົມ ແລະ ໃຫ້ຄຳປຶກສາສຳລັບຜູ້ໃຫ້ການເບິ່ງແຍງດູແລທີ່ບໍ່ໄດ້ຮັບເງິນ<br>√ ການດັດແປງ ແລະ ການປັບພາຫະນະ |